ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**************************

ກະຊວງການຕ່າງປະເທດ
ເອກະສານມາເຖິງ
ເລກທີ...5807...
ວັນທີ...2/4/14...

ນາຍົກລັດຖະມົນຕີ

ເລກທີ.....50........./ນຍ

ນະຄອນຫຼວງວຽງຈັນ, ວັນທີ..1.4..2014..

# ຂໍ້ຕົກລົງ

## ວ່າດ້ວຍອະພິສິດ ແລະ ເອກະສິດທາງການທູດ ຕໍ່ການນໍາໃຊ້ພາຫະນະ (ລົດ) ຢູ່ ສປປ ລາວ

- ອີງຕາມມາດຕາ 12 ຂອງກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003 ;

- ອີງຕາມໜັງສືສະເໜີ ຂອງກະຊວງການຕ່າງປະເທດ ສະບັບເລກທີ 005794/ຕປທ.ພທກ.13, ລົງວັນທີ 07 ສິງຫາ 2013 ;

- ອີງຕາມການຕົກລົງ ແລະ ຊີ້ນໍາ ຂອງກອງປະຊຸມນາຍົກລັດຖະມົນຕີ-ຮອງນາຍົກລັດຖະມົນຕີ ຄັ້ງວັນທີ 08 ມັງກອນ 2014.

- ເພື່ອເຮັດໃຫ້ການຄຸ້ມຄອງ ແລະ ນໍາໃຊ້ພາຫະນະຂອງນັກການທູດ ແລະ ອົງການສາກົນປະຈໍາ ສປປ ລາວ ມີຄວາມເປັນລະບຽບຮຽບຮ້ອຍ ແລະ ສອດຄ່ອງກັບລະບຽບກົດໝາຍຂອງ ສປປ ລາວ ແລະ ສົນທິສັນຍາສາກົນ ທີ່ ສປປ ລາວ ເຂົ້າເປັນພາຄີ.

## ນາຍົກລັດຖະມົນຕີ ຕົກລົງ :

ມາດຕາ 1: ການນໍາເຂົ້າລົດມາຮັບໃຊ້ວຽກງານຂອງນັກການທູດ, ພະນັກງານຊ່ວຍວຽກ ແລະ ອົງການສາກົນປະຈໍາ ສປປ ລາວ.

- ອະນຸຍາດໃຫ້ບັນດານັກການທູດ (ເລຂານຸການເອກ, ເລຂານຸການໂທ, ເລຂານຸການຕຣີ, ອານຸເລຂາ), ພະນັກງານຊ່ວຍວຽກປະຈໍາສະຖານທູດ ແລະ ອົງການສາກົນ ນໍາເຂົ້າລົດຮັບໃຊ້ສ່ວນຕົວຊົ່ວຄາວ ທີ່ມີຄວາມແຮງບໍ່ເກີນ 2.500 ຊີຊີ ແລະ ຍົກເວັ້ນພາສີ-ອາກອນການນໍາເຂົ້າລົດດັ່ງກ່າວ ໄດ້ຜູ້ລະ 01 ຄັນ ໃນໄລຍະປະຕິບັດໜ້າທີ່ຢູ່ ສປປ ລາວ.
- ລົດດັ່ງກ່າວສາມາດຂາຍ ຫຼື ມອບໂອນໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ ຢູ່ ສປປ ລາວ ໄດ້, ພາຍຫຼັງນໍາໃຊ້ໄດ້ 3 ປີ ແລ້ວ ຫຼື ເຈົ້າຂອງລົດສິ້ນສຸດການປະຕິບັດໜ້າທີ່ຢູ່ ສປປ ລາວ ກ່ອນກໍານົດ, ແຕ່ໃນເວລາຂາຍ ແລະ ມອບໂອນລົດດັ່ງກ່າວ ຜູ້ຊື້ (ຄົນລາວ) ຕ້ອງໄດ້ເສຍພາສີ, ອາກອນ ແລະ ຄ່າທໍານຽມຕ່າງໆ ໃຫ້ຖືກຕ້ອງຄົບຖ້ວນ ຕາມກົດໝາຍຂອງ ສປປ ລາວ ພ້ອມທັງໃຫ້ປົດປ້າຍລົດ ສທ ແລະ ຂຕ ອອກສົ່ງຄືນ ແລະ ລາຍງານໃຫ້ກະຊວງການຕ່າງປະເທດ ແຫ່ງ ສປປ ລາວ ຊາບພາຍໃນ 07 ວັນ ນັບແຕ່ມື້ຂາຍ ແລະ ມອບໂອນດັ່ງກ່າວ ເປັນຕົ້ນໄປ.

ມາດຕາ 2: ການອອກປ້າຍລົດໃຫ້ບັນດານັກການທູດ, ພະນັກງານຊ່ວຍວຽກ ແລະ ອົງການສາກົນ ປະຈໍາ ສປປ ລາວ.

- ປ້າຍລົດ ສທ ແມ່ນອອກສະເພາະໃຫ້ນັກການທູດ ແລະ ພະນັກງານຊ່ວຍວຽກປະຈຳສະຖານທູດ ແລະ ສະຖານກົງສຸນຕ່າງປະເທດ ປະຈຳ ສປປ ລາວ.
- ປ້າຍລົດ ຂດ ແມ່ນອອກສະເພາະໃຫ້ຊ່ຽວຊານຕ່າງປະເທດ ປະຈຳຢູ່ອົງການຈັດຕັ້ງສາກົນ, ອົງການສະຖາບັນການເງິນ, ຊ່ຽວຊານໃນກອບຮ່ວມມືສອງຝ່າຍ ແລະ ຊ່ຽວຊານອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ (INGO) ທີ່ກຳລັງປະຕິບັດໜ້າທີ່ຢູ່ ສປປ ລາວ.
- ຫ້າມນຳໃຊ້ລົດໃສ່ປ້າຍ ສທ ແລະ ຂດ ເຄື່ອນໄຫວດຳເນີນທຸລະກິດ-ການຄ້າ ແລະ ຂົນສົ່ງສິ່ງທີ່ຜິດກົດໝາຍ.

<u>ມາດຕາ 3:</u> ການຄຸ້ມຄອງປ້າຍລົດ ສທ ແລະ ຂດ

- ລົດທີ່ໃສ່ປ້າຍ ສທ ແລະ ຂດ ແມ່ນໃຫ້ຄຸ້ມຄອງລວມສູນ ຢູ່ກະຊວງການຕ່າງປະເທດ ບ່ອນດຽວ.
- ໃຫ້ກະຊວງການຕ່າງປະເທດ ເປີດບໍລິການປະຕູດຽວ ກ່ຽວກັບການຂໍໃບອະນຸຍາດນຳເຂົ້າ ແລະ ຍົກເວັ້ນພາສີ, ອາກອນການນຳເຂົ້າລົດຊົ່ວຄາວ, ການຂໍໃສ່ປ້າຍລົດ ແລະ ປຶ້ມຜ່ານແດນລົດ ສຳລັບປ້າຍ ສທ ແລະ ຂດ.
- ການຂໍເສຍພາສີ, ອາກອນ ແລະ ຄ່າທຳນຽມຕ່າງໆໃນເວລາຂາຍ ແລະ ມອບໂອນລົດຂອງນັກການທູດ, ພະນັກງານຊ່ວຍວຽກປະຈຳສະຖານທູດ, ສະຖານກົງສຸນ ແລະ ຊ່ຽວຊານຕ່າງປະເທດ ປະຈຳ ສປປ ລາວ, ຊຶ່ງການບໍລິການແຕ່ລະຢ່າງ ແມ່ນໃຫ້ສຳເລັດພາຍໃນ 15 ວັນ ນັບແຕ່ມື້ໄດ້ຮັບໃບສະເໜີ, ໂດຍສົມທົບກັບ ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງການເງິນ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ, ຊຶ່ງແຕ່ລະພາກສ່ວນ ຕ້ອງພິຈາລະນາອອກໃບອະນຸຍາດ ຫລື ຕອບກະຊວງການຕ່າງປະເທດ ພາຍໃນ 10 ວັນ ນັບແຕ່ມື້ໄດ້ຮັບໜັງສືທາງລັດຖະການ ຈາກກະຊວງການຕ່າງປະເທດ.
- ໃຫ້ກະຊວງການຕ່າງປະເທດ ແຈ້ງໃຫ້ບັນດາສະຖານທູດ, ສະຖານກົງສຸນ ແລະ ອົງການຈັດຕັ້ງສາກົນ ປະຈຳ ສປປ ລາວ ເພື່ອກວດກາ ແລະ ຂໍປ່ຽນປ້າຍລົດຂອງຕົນໃຫ້ຖືກຕ້ອງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 2 ຂອງຂໍ້ຕົກລົງສະບັບນີ້ ໃຫ້ສຳເລັດພາຍໃນ 90 ວັນ ແລະ ລາຍງານການຂາຍ ແລະ ການມອບໂອນລົດຂອງຕົນໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ ຢູ່ ສປປ ລາວ ຕັ້ງແຕ່ປີ 2010 ມາຮອດປະຈຸບັນ ໃຫ້ກະຊວງການຕ່າງປະເທດຊາບ ພາຍໃນ 60 ວັນ ນັບແຕ່ມື້ໄດ້ຮັບໜັງສືທາງລັດຖະການ ຈາກກະຊວງການຕ່າງປະເທດ.

<u>ມາດຕາ 4:</u> ໃຫ້ກະຊວງການຕ່າງປະເທດ ສົມທົບກັບບັນດາກະຊວງ, ອົງການທີ່ກ່ຽວຂ້ອງ ແນະນຳລະອຽດ ແລະ ອຳນວຍຄວບຄຸມ ການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

<u>ມາດຕາ 5:</u> ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນທຸກຂັ້ນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

<u>ມາດຕາ 6:</u> ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ບັນດາຂໍ້ກຳນົດ, ກົດລະບຽບໃດທີ່ອອກກ່ອນ ແລະ ຂັດກັບຂໍ້ຕົກລົງສະບັບນີ້ ແມ່ນໃຫ້ຍົກເລີກ.

ນາຍົກລັດຖະມົນຕີ

ທອງສິງ ທຳມະວົງ